**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

====00====

ສຳນັກງານນາຍົກລັດຖະມົນຕີ

ເລກທີ 169 / ນຍ.

ນະຄອນຫລວງ ວຽງຈັນ, ວັນທີ 26-11-2004

ກົມການບິນພົນລະເຮືອນ
ເອກະສານ ຂາເຂົ້າ
ເລກທີ 1345/ກບພຣ
ລົງວັນທີ 8/12/04

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ.

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 02/ສພຊ ລົງວັນທີ 6 ພຶດສະພາ 2003.
- ອີງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ່ 13587 / ຄຂປກ ລົງວັນທີ 21 / 10 / 2004.

**ນາຍົກລັດຖະມົນຕີ ອອກດຳລັດ :**

## ໝວດທີ I
## ຂໍ້ກຳນົດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ກຳນົດພາລະບົດບາດ, ໜ້າທີ່ ແລະຂອບເຂດສິດ ຂອງຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ (ຄຊກຊ) ເພື່ອແນໃສ່ແກ້ໄຂບັນຫາການຊອກຄົ້ນເຄື່ອງບິນ, ພາຫະນະຂົນສົ່ງທາງບົກ ແລະ ທາງນ້ຳຊຶ່ງຕົກຢູ່ໃນພາວະສຸກເສີນຫລືເກີດອຸບັດຕິໄພ ແລະ ໃຫ້ການຊ່ວຍເຫລືອຜູ້ທີ່ຖືກເຄາະຮ້າຍຈາກເຫດການນັ້ນ ໃຫ້ທ່ວງທັນເວລາ ແລະ ມີປະສິດທິຜົນ. ສາມາດປະສານສົມທົບກັບລະບົບການຊອກຄົ້ນແລະກູ້ໄພຂອງບັນດາປະເທດອະນຸພາກພື້ນອ່າງແມ່ນ້ຳຂອງ(GMS) ກໍ່ຄື ຂອງອາຊຽນ ໄດ້ເປັນຢ່າງດີ.

7. ຈັດຕັ້ງເຜີຍແຜ່ ສັນຍາ ຂໍ້ຕົກລົງ ສອງແລະຫລາຍຝ່າຍອາຊຽນ, ກັບປະເທດໃກ້ຄຽງ ແລະ ສົນທິສັນຍາສາກົນຕ່າງໆ ທີ່ກ່ຽວພັນກັບວຽກງານການຊອກຄົ້ນແລະກູ້ໄພ;
8. ເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບວຽກງານການຊອກຄົ້ນແລະກູ້ໄພ;
9. ໂຄສະນາ ຂົນຂວາຍໃຫ້ພາກສ່ວນເອກະຊົນ ຫລື ການຈັດຕັ້ງທີ່ບໍ່ສັງກັດລັດ ເຂົ້າປະກອບສ່ວນໃນການສະໜອງຂໍ້ມູນ ຂ່າວສານທີ່ເປັນປະໂຫຍດ ແລະ ເຂົ້າຮ່ວມການຊອກຄົ້ນແລະກູ້ໄພໃນກໍລະນີຈຳເປັນ;

**ມາດຕາ 4.** ຂອບເຂດສິດ

1. ປະສານສົມທົບແລະພົວພັນກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນແລະຕ່າງປະເທດທີ່ກ່ຽວພັນກັບພາລະບົດບາດແລະໜ້າທີ່ຂອງຕົນ;
2. ເຄື່ອນໄຫວແລກປ່ຽນ, ເກັບກຳຂໍ້ມູນດ້ານການຈັດຕັ້ງປະຕິບັດ, ບົດຮຽນແລະປະສົບການຕົວຈິງຜ່ານມາ ກ່ຽວກັບວຽກງານການຊອກຄົ້ນແລະກູ້ໄພ;
3. ຈັດຕັ້ງເຜີຍແຜ່ ສັນຍາ ຂໍ້ຕົກລົງສອງແລະຫລາຍຝ່າຍ ກ່ຽວກັບການຊອກຄົ້ນແລະກູ້ໄພກັບປະເທດໃກ້ຄຽງ ອາຊຽນ ແລະ ອົງການສາກົນ;
   ຈັດຝຶກອົບຮົມລະບຽບການອັນໃໝ່, ທົບທວນຄືນບົດຮຽນເກົ່າຜ່ານມາ ແລະ ຝຶກຊ້ອມຮ່ວມກັນເປັນແຕ່ລະໄລຍະ ໃຫ້ເກີດຄວາມຊຳນານໃນການປະສານງານແລະປະຕິບັດຕົວຈິງ;
4. ນຳໃຊ້ບຸກຄະລາກອນ, ພາຫະນະ, ອຸປະກອນ, ເຄື່ອງມື ແລະ ງົບປະມານຮ່ວມກັນ ຕາມການປະກອບແລະອະນຸມັດຈາກລັດຖະບານ; ແລະ
5. ສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

## ໝວດ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5.** ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

5.1 ໂຄງປະກອບບຸກຄະລາກອນ

| | | |
|---|---|---|
| 1. | ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ | ເປັນປະທານ. |
| 2. | ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ (ຄ.ຂ.ປ.ກ) | ເປັນຮອງປະທານ. |
| 3. | ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນຄວາມສະຫງົບ | ເປັນຮອງປະທານ. |
| 4. | ຫົວໜ້າກົມການບິນພົນລະເຮືອນ ກະຊວງ ຄ.ຂ.ປ.ກ | ເປັນກຳມະການ. |

ມາດຕາ 7. ມອບໃຫ້ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ປະທານຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ຜັນຂະຫຍາຍລະອຽດ, ກຳນົດແບບແຜນວິທີເຮັດວຽກ ແລະໜ້າທີ່ລະອຽດຂອງແຕ່ລະພາກສ່ວນທີ່ປະກອບເຂົ້າໃນຄະນະກຳມະການ ແລະ ໜ້າທີ່ຂອງ ສູນປະສານງານໃນການກູ້ໄພ(ກອງເລຂາ).

## ໝວດທີ V

## ບົດບັນຍັດສຸດທ້າຍ

ມາດຕາ 8. ກາປະທັບ ແລະ ງົບປະມານ

ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ແລະ ສູນປະສານງານ-ວຽງຈັນ ມີກາປະທັບຂອງຕົນເອງ ເພື່ອນຳໃຊ້ເຂົ້າວຽກງານທາງລັດຖະການ.

ຄະນະກຳມະການຊອກຄົ້ນແລະກູ້ໄພແຫ່ງຊາດ ມີງົບປະມານສະເພາະເພື່ອໃຊ້ຈ່າຍເຂົ້າໃນວຽກງານການຊອກຄົ້ນແລະກູ້ໄພ ແລະ ບໍລິຫານວຽກງານປະຈຳວັນ ໂດຍການຂື້ນແຜນຄາດຄະເນລາຍຈ່າຍປະຈຳປີ ນຳຮ່ວງຂອງກະຊວງປ້ອງກັນປະເທດ ຫລື ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

ມາດຕາ 9. ການຈັດຕັ້ງປະຕິບັດ

ກະຊວງປ້ອງກັນປະເທດ ພ້ອມດ້ວຍບັນດາກະຊວງ,ອົງການທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ຄວາມສະດວກ ແລະ ປະສານສົມທົບກັນ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 10. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ລະບຽບການໃດທີ່ຂັດກັບດຳລັດ ສະບັບນີ້ ລ້ອນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ**

ບຸນຍັງ ວໍລະຈິດ